**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ 5003 /ກງ

ນະຄອນຫຼວງວຽງຈັນ, ວັນທີ 05 ຕຸລາ 2021

# <u>ແຈ້ງການ</u>

**ຮຽນ:**
- ທ່ານ ລັດຖະມົນຕີ ບັນດາກະຊວງ ແລະ ຫົວໜ້າອົງການທຽບເທົ່າ ທີ່ນັບຖື;
- ທ່ານ ເຈົ້າຄອງນະຄອນຫຼວງ, ບັນດາທ່ານ ເຈົ້າແຂວງ ທີ່ນັບຖື;
- ບັນດາທ່ານ ເຈົ້ານະຄອນ, ເຈົ້າເມືອງ, ເທດສະບານ;
- ບັນດາວິສາຫະກິດຂອງລັດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ແຈ້ງການນຳໃຊ້ມາດຖານເອກະສານການຂຽນບົດລາຍງານການປະເມີນການປະມູນ ສະບັບເອກະພາບ ປີ 2021 ເປັນທາງການ.

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 05 ກໍລະກົດ 2012.
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2007 ວ່າດ້ວຍການ ຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນຂອງລັດ ສະບັບເລກທີ 2115/ຄຊລ, ລົງວັນທີ 16 ກັນຍາ 2021.

ເນື່ອງຈາກການຍົກລະດັບດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບເລກທີ 03/ນຍ, ລົງວັນທີ 09 ມັງກອນ 2004 ເປັນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ຈຶ່ງຈຳເປັນຕ້ອງໄດ້ປັບປຸງເນື້ອໃນມາດຖານເອກະສານການຂຽນບົດລາຍງານການປະເມີນການປະມູນ ສະບັບເອກະພາບ ປີ 2015 ໃຫ້ສອດຄ່ອງກັບກົດໝາຍ. ປັດ ຈຸບັນການປັບປຸງ ແລະ ຮຽບຮຽງຄືນໃໝ່ໄດ້ສຳເລັດ ຊຶ່ງເປັນເອກະສານການຂຽນບົດລາຍງານການປະເມີນການປະມູນ ສະບັບເອກະພາບປີ 2021 ດັ່ງມີລາຍລະອຽດລຸ່ມນີ້:

- ມາດຖານເອກະສານການຂຽນບົດລາຍງານການປະເມີນການປະມູນ ສະບັບເອກະພາບ ປີ 2021 ສຳລັບການຈັດຊື້ ສິນຄ້າ ແລະ/ຫຼື ການບໍລິ ການວຽກງານ;

- ມາດຖານເອກະສານການຂຽນບົດລາຍງານການປະເມີນການປະມູນ ສະບັບເອກະພາບ ປີ 2021 ສໍາລັບການກໍ່ສ້າງ ແລະ/ຫຼື ສ້ອມແປງ;

ມາດຖານເອກະສານການຂຽນບົດລາຍງານການປະເມີນການປະມູນຈັດຊື້-ຈັດຈ້າງ 02 ສະບັບນີ້ ຈະໄດ້ນໍາໃຊ້ຮ່ວມກັນກັບການຈັດຊື້-ຈັດຈ້າງ ທີ່ໃຊ້ເງິນງົບປະມານພາຍໃນ, ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກທະນາຄານໂລກ, ທະນາຄານພັດທະນາອາຊີ ແລະ ຜູ້ໃຫ້ທຶນອື່ນໆ, ສະນັ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ມີຄວາມເປັນເອກະພາບກັນນໍາໃຊ້ໃນຂອບເຂດທົ່ວປະເທດ ສະນັ້ນ, ກະຊວງການເງິນຈຶ່ງອອກແຈ້ງການມາຍັງ ບັນດາທ່ານລັດຖະມົນຕີບັນດາກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ທ່ານ ເຈົ້າຄອງນະຄອນຫຼວງ, ບັນດາທ່ານ ເຈົ້າແຂວງ, ທ່ານ ເຈົ້ານະຄອນ, ບັນດາທ່ານ ເຈົ້າເມືອງ, ເທດສະບານ ແລະ ບັນດາວິສາຫະກິດຂອງລັດໃນຂອບເຂດທົ່ວປະເທດ ໃຫ້ນໍາໃຊ້ມາດຖານເອກະສານການຂຽນບົດລາຍງານການປະເມີນການປະມູນ ສະບັບເອກະພາບປີ 2021 ແທນເອກະສານສະບັບເອກະພາບ ປີ 2015.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງບັນດາທ່ານ ເພື່ອຊາບ ແລະ ຊີ້ນໍາການຈັດຕັ້ງປະຕິບັດການຈັດຊື້-ຈັດຈ້າງ ຕາມແຈ້ງການສະບັບນີ້ດ້ວຍ.

**ລັດຖະມົນຕີກະຊວງການເງິນ**

ບຸນໂຈມ ອຸບົນປະເສີດ